ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

**Weekly news update from 3-9/2/2018 about land and natural resource issues in Laos.**
**Summarized by LIWG Communication Officer.**

**………..**

**ສະຫຼຸບຂ່າວປະຈຳອາທິດລະຫວ່າງວັນທີ 3-9/2/2018 ກ່ຽວກັບປະເດັນທີ່ດິນແລະຊັບພະຍາກອນທຳມະຊາດໃນປະເທດລາວ.**
**ສັງລວມໂດຍ ທີມງານສື່ສານ ກອງເລຂາ LIWG.**

## English news

**Austerity policy slows relocation of government offices: Vientiane Times**
***3 February 2018***
The relocation of government offices to the Dongmarkkhai area in Vientiane's Xaythany district has stalled as the government is cutting back on non-essential spending, a senior official says.
Under the relocation project, land authorities allocated 300 hectares of land in Dongmarkkhai for the construction of various ministry and government buildings.
The relocation of government offices is aimed at reducing traffic congestion and shifting development interest from the city centre to new sites as stipulated in the capital's urban development master plan which regulates urban planning until 2030.

**Laos, Vietnam sign 12 deals to broaden cooperation: Vientiane Times**
***6 February 2018***
Laos and Vietnam signed 12 cooperation agreements to enhance relations and broaden cooperation between the two neighbours at their Cooperation Committee meeting in Vientiane
The documents signed included an agreement to jointly develop the Vung Ang port which will enable land-locked Laos to access sea trade routes, a MOU was also signed in which Vietnam intends to purchase energy generated by a coal-fired power plant in Bualapha district, Khammuan province. An MOU to sell electricity generated by various hydropower plants in Laos to Vietnam was also signed. These include the Xekong 3A and 3B projects in Xekong province. An MOU on investment in a 500-1,000 kV transmission line connecting northern Laos to southern Vietnam was also signed. Once it is operational, the transmission line will facilitate the export of power to Vietnam.
Both sides also signed an MOU for cooperation in the construction of a hydropower project in Luang Prabang province. An MOU on energy and mining cooperation for 2018 was also signed.
Mr Thongloun told a press conference shortly after the meeting that Laos and Vietnam would continue to enhance their cooperation in a wide range of fields.

**Laos-China railway'20.3 percent complete', compensation still unpaid: Vientiane Times**
***7 February 2018***
Construction of the 409-km Laos-China railway was 20.3 percent complete as of December 2017 after a whole year of operations, Lao authorities in charge said last week.
The US$5.986 billion project has a re-scheduled completion date of December 2, 2021, which is 29 days earlier than the original deadline of December 31, 2021.
As much as 84 percent of the land area needed for the railway has been handed over to the Chinese contractors so they can proceed with construction.
It has been reported that 4,411 families in the provinces of Luang Namtha, Oudomxay, Luang Prabang and Vientiane and in the capital city will be affected by the railway.
In total, 3,832 hectares of land and 3,346 buildings, as well as crops and trees, will be impacted. Lao authorities in charge are aware that they are up against a raft of challenges resulting from the Laos-China railway.
*Read more: ICT in Laos to facilitate China's Belt and Road plan*

**[22 Companies Invest in Thakhek Specific Economic Zone](#): KPL**

***9 February 2018***

Twenty two local and foreign companies have signed agreements with relevant authorities to invest in the Thakhek Specific Economic Zone (TSEZ) since 2012.

Almost 600 plots of land of local people have been reportedly affected by the 75-year project.

The compensation for people's property loss caused by the concessional project will cost the developer more than 25 billion kip.

Sitting on 1,035 ha, TSEZ has been divided into 10 small zones including, among others, commerce, department stores, restaurants, banking and finance, hotels and entertainment, convention, real estate, and logistics.

**Expressway plans attract support among affected landholders: Vientiane Times**

***9 February 2018***

The development of a planned expressway linking Vientiane's city centre to its outskirts is supported by up to 80 percent of respondents to a recent questionnaire designed to survey opinions of affected landholders, according to an official report.

Of the 167 questionnaires returned, representing 78 percent of the total distributed, some 133 people indicated they were in favour of the project proposal, and another 34 were opposed, according to the report from the authorities.

The report stated that about 291 hectares of land in total would be sought for the expressway.

Bidders are required to demonstrate that they are technically and financially capable of carrying out the work, including having sufficient resources to pay the full amount of compensation due to property owners, in line with Prime Ministerial Decree No. 84.

Construction of the expressway, which is estimated to cost between US$150 million and US$200 million, is expected to be completed before February 2021.

## ຂ່າວພາສາລາວ

**ພິທີເຊັນສັນຍາສຳປະທານທີ່ດິນລັດ ແລະ ລ້ອງຫ້ວຍຊີ ເພື່ອພັດທະນາເປັນແຫຼ່ງທ່ອງທ່ຽວ ລ່ອງເຮືອຢາງ: ຂ່າວໂດຍ ປະກາດ**

ພິທີເຊັນສັນຍາສຳປະທານທີ່ດິນລັດ ແລະ ລ້ອງຫ້ວຍຊີ ເພື່ອພັດທະນາເປັນແຫຼ່ງທ່ອງທ່ຽວ ລ່ອງເຮືອຢາງ (KAYAKKING) ຢູ່ລະຫວ່າງ ບ້ານທ່ານແປ້ນ ຫາ ບ້ານ ປາກອູ້ ຫາ ບ້ານປາກຊີ ເມືອງຫຼວງພະບາງ, ແຂວງຫຼວງພະບາງ.

ໂຄງການສຳປະທານທີ່ດິນລັດ ແລະ ລ້ອງຫ້ວຍຊີ ເພື່ອພັດທະນາເປັນແຫຼ່ງທ່ອງທ່ຽວ ລ່ອງເຮືອຢາງ (KAYAKKING) ຢູ່ລະຫວ່າງບ້ານທ່ານແປ້ນ ຫາ ບ້ານ ປາກອູ້ ຫາ ບ້ານປາກຊີ ເມືອງຫຼວງພະບາງ, ແຂວງຫຼວງພະບາງ ມີມູນຄ່າການລົງທຶນເບື້ອງຕົ້ນທັງໝົດ 380.000 ໂດລາສະຫະລັດ, ອາຍຸສຳປະທານ 30 ປີ, ເນື້ອທີ່ທັງໝົດ 6 ເຮັກຕາ 054 ຕາແມັດ.

ຈຸດປະສົງຫຼັກຂອງໂຄງການເພື່ອພັດທະນາສົ່ງເສີມ ແລະ ຂະຫຍາຍວຽກງານຂະແໜງການທ່ອງທ່ຽວທີ່ແຂວງຫຼວງພະບາງຖືເປັນປາຍແຫຼມຂອງການພັດທະນາເສດຖະກິດ-ສັງຄົມ.

**ຄິງໂຣມັນ ກາສິໂນ ອອກຖະແຫຼງການຕອບໂຕ້ ສ. ອາເມຣິກາ ທີ່ຂຶ້ນບັນຊີດຳເປັນອາຊະຍາກຳຂ້າມຊາດ: ຂ່າວໂດຍ ອິດສະຫຼະ**

*ວັນທີ 4 ກຸມພາ 2018*

ພາຍຫຼັງທີ່ກະຊວງການເງິນຂອງສະຫະລັດ ອາເມຣິກາ ປະກາດຂຶ້ນບັນຊີດຳ ຄິງໂຣມັນ ກາສິໂນ ທີ່ຕັ້ງຢູ່ເຂດເສດຖະກິດພິເສດສາມຫຼ່ຽມທອງຄຳ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ ເປັນອົງອາຊະຍາກຳຂ້າມຊາດ, ຫຼ້າສຸດ ທ່ານ ຈ້າວ ເຫວີຍ ປະທານສະພາບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ ປະທານກຸ່ມບໍລິສັດ ດອກງີ້ວຄຳ ຕອບໂຕ້ທາງການ ສ.ອາເມຣິກາວ່າ: ການຂວ້ຳບາດຝ່າຍດຽວຕໍ່ປະເທດອື່ນ ກໍ່ຄືຂົງເຂດອື່ນແມ່ນພຶດຕິກຳບໍ່ມີເຫດຜົນ ແລະ ໄຮ້ສາລະ, ເປັນຈຸດປະສົງອື່ນເພື່ອ ສະແດງພຶດຕິກຳຂະຫຍາຍອຳນາດອິດທິພົນ, ພຶດຕິກຳນີ້ແມ່ນກໍ່ໃຫ້ເກີດຄວາມເຂົ້າໃຈຜິດຢ່າງໜັກໜ່ວງ ຕໍ່ສັງຄົມ, ເຂດເສດຖະກິດພິເສດສາມຫຼ່ຽມ ແລະ ກຸ່ມບໍລິສັດດອກງີ້ວ ແມ່ນສະແດງຄວາມຄັດຄ້ານຢ່າງເດັດຂາດຕໍ່ການກະທຳທີ່ບໍ່ມີເຫດຜົນແບບນັ້ນ.

**ລາວໄດ້ສຳຫຼວດແຫຼ່ງຜະລິດໄຟຟ້າແລ້ວ 443 ແຫ່ງ ມີກຳລັງຕິດຕັ້ງກວ່າ 30 ພັນເມກາວັດ: ຂ່າວໂດຍ ເສດຖະກິດ-ສັງຄົມ**

*ວັນທີ 7 ກຸມພາ 2018*

ປັດຈຸບັນ ສປປ ລາວ ໄດ້ມີການສຳຫຼວດແຫຼ່ງຜະລິດພະລັງງານແລ້ວທັງໆົດ 443 ໂຄງການ ເຊິ່ງໃນໄລຍະທີ່ຜ່ານມາຈີນມາລົງທຶນໃນຂະແໜງການນີ້ຢູ່ໃນລະດັບຕົ້ນໆລວມມີເກືອບ 30 ໂຄງການ.

ໃນຈຳນວນໂຄງການດັ່ງກ່າວກວມເອົາ ພະລັງງານແສງຕາເວັນ, ພະລັງງານລົມ, ຖ່ານຫີນ, ໄບໂອເມັສ, ສະເພາະຊັບພະຍາກອນແຫຼ່ງນ້ຳທຳມະຊາດ ຊຶ່ງຖ້າຂຸດຄົ້ນທັງໝົດຈະສາມາດຜະລິດພະລັງງານໄຟຟ້າໄດ້ປະມານ 26 ພັນກວ່າເມກາວັດ ຫຼື ຫຼາຍກວ່າ 200 ເຂື່ອນ. ສຳລັບການຮ່ວມມືໃນການພັດທະນາຂະແໜງການພັດທະນາພະລັງງານໄຟຟ້າ ແລະ ບໍ່ແຮ່ ລາວ-ຈີນ ມີ 27 ໂຄງການ.

**ລັດກວດເຫັນລາຍຮັບບໍ່ມອບເຂົ້າງົບປະມານ 600 ຕື້ກວ່າກີບ: ຂ່າວໂດຍ ເສດຖະກິດ-ສັງຄົມ**

*ວັນທີ 8 ກຸມພາ 2018*

ຈາກຜົນການກວດສອບບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ຈຳນວນ 58 ຫົວໜ່ວຍ ໃນສົກປີ 2015-2016, ອົງການກວດສອບແຫ່ງລັດໄດ້ກວດສອບເຫັນລາຍຮັບເພີ່ມທີ່ບໍ່ໄດ້ມອບເຂົ້າງົບປະມານແຫ່ງລັດຈຳນວນ 689.61 ຕື້ກີບ ໃນນັ້ນເປັນຂອງສູນກາງ 516.07 ຕື້ກີບ ແລະ ທ້ອງຖິ່ນ ຈານວນ 173.54 ຕື້ກີບ.

ໃນການກວດສອບດັ່ງກ່າວ ຍັງພົບເຫັນ ມູນຄ່າໃນຂະແໜງຄຸ້ມຄອງຊັບສິນຂອງລັດໄດ້ກວດສອບ ເຫັນໜີ້ ຕ້ອງຮັບຈາກເງິນຂາຍໄມ້ ຄ່າປັບໃໝຄ່າເຊົ່າ-ສຳປະທານທີ່ດິນ ແລະ ຄ່າຊັບພະຍາກອນທຳມະຊາດ ຈຳນວນ 427.76 ຕື້ກີບ, ກວດເຫັນການຂຸດຄົ້ນໄມ້ເກີນໂກຕາທີ່ລັດຖະບານອະນຸມັດຂອງ 2 ແຂວງ ຈຳນວນ 28 ພັນກວ່າແມັດກ້ອນ, ຂຸດຄົ້ນໄມ້ບໍ່ໄດ້ຮັບອະນຸຍາດລັດຖະບານ 4 ແຂວງ 11 ພັນກວ່າແມັດກ້ອນ ແລະ ການຈັດຕັ້ງປະຕິບັດການຂາຍໄມ້ຂອງ 4 ແຂວງບໍ່ໄດ້ດຳເນີນການປະມູນຕາມລະບຽບການ 25 ພັນກວ່າແມັດກ້ອນ.

*ອ່ານຫົວຂໍ້ຂ່າວທີ່ກ່ຽວຂ້ອງ: ລັດຢຶດຊັບຈາກການສໍ້ລາດບັງຫຼວງຄືນໄດ້ຫຼາຍພັນຕື້ ພ້ອມທັງມີບົດລົງໂທດຕໍ່ຜູ້ກະທຳຜິດ.*

**ມີແລ້ວ 22 ໂຄງການລົງທຶນໃນເຂດເສດຖະກິດພິເສດສະເພາະທ່າແຂກ ສ່ວນຊົດເຊີຍດິນປະຊາຊົນພວມໄດ້ 40.85%: ຂ່າວໂດຍ ເສດຖະກິດ-ສັງຄົມ**

*ວັນທີ 8 ກຸມພາ 2018*

ເຂດເສດຖະກິດສະເພາະທ່າແຂກ ແຂວງຄຳມ່ວນມີຕອນດິນທີ່ຈະຕ້ອງໄດ້ຊົດເຊີຍເວນຄືນປະຊາຊົນທັງໝົດ 592 ຕອນມູນຄ່າ 25.74 ຕື້ກີບ ມາຮອດປັດຈຸບັນ ສາມາດປະຕິບັດແລ້ວ 263 ຕອນມູນຄ່າ 10.51 ຕື້ກີບ ເທົ່າກັບ 40.85% ຂອງແຜນການຊົດເຊີຍຕອນດິນທັງໝົດ ຂະນະທີ່ເວລານີ້ເຂດດຶງດູດນັກລົງທຶນ ພາຍໃນ ແລະ ຕາງຊາດ ເຂົ້າມາດຳເນີນກິດຈະການໄດ້ 20 ກວ່າໂຄງການ.

ຕາມຂໍ້ມູນຈາກກົມສົ່ງເສີມການລົງທຶນກະຊວງແຜນການ ແລະ ການລົງທຶນໃຫ້ຮູ້ວ່າ ເຂດດັ່ງກ່າວໄດ້ຮັບການສຳປະທານ 75 ປີ ໃນເນື້ອທີ່ 1,035 ເຮັກຕາ.

**ປີຜ່ານມາລາວສັ່ງຍຸບໂຮງງານປຸງແຕ່ງໄມ້ທີ່ຂັດຄຳສັ່ງເລກທີ 15/ນຍ ກວ່າ 340 ແຫ່ງ: ຂ່າວໂດຍ ລາວພັດທະນາ**

*ວັນທີ 8 ກຸມພາ 2018*

ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເຂັມມະນີ ພົນເສນາ ໃຫ້ຮູ້ໃນກອງປະຊຸມສະຫຼຸບວຽກງານປະຈຳປີ 2017ວ່າ: ປີຜ່ານມາ ຂະແໜງການຕົນໄດ້ເອົາໃຈໃສ່ປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີເລກທີ 15/ນຍ ວ່າດ້ວຍຄຸ້ມຄອງການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ໃຫ້ເຂັ້ມງວດ ແລະ ສາມາດດັດສົມ-ຍຸບເລີກໂຮງງານປຸງແຕ່ງໄມ້ທັງໝົດ 349 ແຫ່ງໃນຈຳນວນ 1,500 ແຫ່ງທົ່ວປະເທດ. ນອກນີ້ ຍັງໄດ້ສັ່ງຍຸບຫົວໜ່ວຍທຸລະກິດປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວຫຼາຍກວ່າພັນຫົວໜ່ວຍ ອັນໄດ້ພາໃຫ້ສະພາບການຂຸດຄົ້ນ ແລະ ລັກລອບຕັດໄມ້ທຳລາຍປ່າຫຼຸດລົງໃນທົ່ວປະເທດ.

ໃນປີຜ່ານມາຍັງມີກຸ່ມຄົນບໍ່ດີຈຳນວນໜຶ່ງລັກລອບຈູດໄມ້ທີ່ລັດຢຶດໄດ້ຈຳນວນ 8,700 ກວ່າແມັດກ້ອນທີ່ແຂວງອັດຕະປື ເຮັດໃຫ້ລັດເສຍງົບປະມານໃນການປະມູນຂາຍໄມ້ເຫຼົ່ານັ້ນເປັນຈຳນວນຫຼາຍ.

**ລາວ ມີທ່າແຮງບົ່ມຊ້ອນດຶງດູດກຸ່ມບໍລິສັດຈີນ ເຂົ້າມາລົງທຶນດ້ານພະລັງງານໄຟຟ້າ: ຂ່າວໂດຍ ຂ່າວສານປະເທດລາວ**

***ວັນທີ 9 ກຸມພາ 2018***

ທ່າແຮງບົ່ມຊ້ອນ ທີ່ເຮັດໃຫ້ບໍລິສັດ ສິນໃຈ ເຂົ້າມາລົງທຶນໃນ ສ ປປ ລາວ ແມ່ນ ມີສອງປະເດັນຄື: ສອງປະເທດ ລະຫວ່າງ ຈີນ-ລາວ ເປັນປະເທດ ບ້ານໃກ້ ເຮືອນຄຽງ ມີສາຍພົວພັນ ມິດຕະພາບອັນດີງາມ ທີ່ເປັນ ມູນເຊື້ອຍາວນານ

ສໍາລັບ ປະເດັນທີສອງຄື, ລັດຖະບານ ສປປ ລາວ ໄດ້ຕັ້ງແຜນຍຸດທະສາດ ໃນການສ້າງໃຫ້ ສປປ ລາວ ເປັນໝໍ້ໄຟ ຂອງອາຊຽນ ເຊິ່ງ ມັນເປັນໂອກາດ ແລະ ທ່າແຮງ ທີ່ດີໃຫ້ແກ່ໂຄງການ ສປ ຈີນ ທີ່ຈະເຂົ້າມາລົງທຶນ ກ່ຽວກັບພະລັງງານໄຟຟ້າ, ເນື່ອງຈາກວ່າ ແຜນຍຸດທະສາດ ຂອງ ສປປ ລາວກັບແຜນພັດທະນາ ວິສາຫະກິດ ສປ ຈີນ ແມ່ນ ມີຄວາມສອດຄ່ອງກັນ ກັບບັນດາວິສາຫະກິດ ຈີນທີ່ດໍາ ເນີນທຸລະກິດພະລັງງານໄຟຟ້າ ຢາກເຂົ້າມາລົງທຶນຢູ່ ສປປ ລາວ

*ອ່ານປະເດັນເພີ່ມເຕີມກ່ຽວກັບການລົງທຶນຈີນ: ທະນາຄານ ໄອຊີບີຊີ ຊຸກຍູ້ການພັດທະນາຕາມ ໜຶ່ງແລວ ໜຶ່ງເສັ້ນທາງ*